ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----====000====----

ທະນາຄານ ແຫ່ງ ສປປ ລາວ
ສຳນັກງານ ຄຄຊ

ເລກທີ 097 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 17 JUL 2015

ຮຽນ: ທ່ານ ດຣ. ສົມພາວ ໄຟສິດ ຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ຮອງປະທານ ຄຄຊ ຜູ້ປະຈາການ ທີ່ນັບຖືຢ່າງສູງ,

ເລື່ອງ: ລາຍງານສະພາບການເຄື່ອນໄຫວຂອງຕະຫຼາດຫຼັກຊັບ ສປ.ຈີນ.

- ອີງຕາມທິດຊີ້ນຳຂອງທ່ານ ຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ ຮອງປະທານ ຄຄຊ ຜູ້ປະຈຳການໃນວັນທີ 10 ກໍລະກົດ 2015.

ສຳນັກງານ ຄຄຊ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບ ສະພາບການເຄື່ອນ ໄຫວຂອງຕະຫຼາດຫຼັກຊັບ ສປ.ຈີນ ແຕ່ທ້າຍປີ 2014 ເຖິງ ປະຈຸບັນ ມີຄືດັ່ງນີ້:

ນັບແຕ່ເດືອນພະຈິກ 2014 ເປັນຕົ້ນມາ ດັດຊະນີຕະຫຼາດຫຼັກຊັບ ທັງ ສອງ ແຫ່ງ ຂອງ ສປ.ຈີນ ໄດ້ປັບຕົວເພີ່ມຂຶ້ນຢ່າງຕໍ່ເນື່ອງ ໃນນັ້ນ, ດັດຊະນີຕະຫຼາດຫຼັກຊັບຊຽງໄຮ້ ໄດ້ປັບເພີ່ມຂຶ້ນຈາກ 2.682,83 ຈຸດ ໃນທ້າຍເດືອນພະຈິກ 2014 ເຖິງຈຸດສູງສຸດທີ 5.166,35 ຈຸດ ໃນວັນທີ 12 ມິຖຸນາ 2015 ສ່ວນ ຕະຫຼາດຫຼັກຊັບເຊີນເຈີ້ນ ໄດ້ປັບເພີ່ມຂຶ້ນ ຈາກ 1.420,32 ຈຸດ ໃນທ້າຍເດືອນດຽວກັນ ເຖິງຈຸດສູງສຸດທີ 3.140,66 ຈຸດ ໃນວັນທີ 12 ມິຖຸນາ 2015 ສາເຫດຫຼັກຂອງການເພີ່ມຂຶ້ນຄືດັ່ງກ່າວ ມາຈາກ: ການເປີດເຊື່ອມໂຍງການຊື້-ຂາຍຫຼັກຊັບລະຫວ່າງຕະຫຼາດຫຼັກຊັບຊຽງໄຮ້ ແລະ ຕະຫຼາດຫຼັກຊັບຮົງກົງ ແລະ ການດຳເນີນມາດຕະການຫຼຸດອັດຕາດອກເບ້ຍ ໃນຊ່ວງດັ່ງກ່າວ ຊຶ່ງຈຸດປະສົງກໍ່ເພື່ອກະຕຸ້ນເສດຖະກິດ ແລະ ກະຕຸ້ນສະພາບຄ່ອງຂອງຕະຫຼາດທຶນ ສປ.ຈີນ.

ຈາກສະພາບການ ທີ່ເພີ່ມຂຶ້ນຢ່າງຮ້ອນແຮງແບບຕໍ່ເນື່ອງ ຂອງດັດຊະນີຕະຫຼາດຫຼັກຊັບ ທັງ ສອງ ແຫ່ງ ຄືດັ່ງກ່າວ, ຄະນະກຳມະການຄຸ້ມຄອງຫຼັກຊັບ ສປ.ຈີນ (CSRC) ຈຶ່ງອອກມາດຕະການຈຳນວນໜຶ່ງ ຄື:

3. ໃຫ້ວາງຫຼັກຊັບຄ້ຳປະກັນ (Margin Requirement) ສາລັບການຊື້-ຂາຍແບບບໍ່ວາງເງິນມາດຈຳກ່ອນສົ່ງຄຳສັ່ງຊື້-ຂາຍ (Margin) ໃນດັດຊະນີ CSI 500;
4. ຫ້າມຊື້-ຂາຍຮຸ້ນ ດ້ວຍເງິນກູ້ຢືມ.

ໃນກາງເດືອນມິຖຸນາ 2015, ໄດ້ມີບໍລິສັດຈົດທະບຽນ ຢ່າງໜ້ອຍ 1.300 ແຫ່ງ ຫຼື ປະມານ 43% ຂອງຮຸ້ນທີ່ຈົດທະບຽນ ໃນຕະຫຼາດຫຼັກຊັບ ຮ້ອງຂໍໂຈະການຊື້-ຂາຍຮຸ້ນຂອງບໍລິສັດຕົນ ແລະ ມີບໍລິສັດຂໍຈົດທະບຽນໃໝ່ ຈຳນວນ 28 ແຫ່ງ ໄດ້ຂໍໂຈະການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບ ຊໍ່ຖາວ ຈົນກວ່າສະພາບການຂອງຕະຫຼາດຫຼັກຊັບ ຈະຄືນສູ່ສະພາບປົກກະຕິ. ພ້ອມດຽວກັນນັ້ນ, ດັດຊະນີຕະຫຼາດຫຼັກຊັບ ທັງ ສອງ ແຫ່ງ ກໍ່ໄດ້ຫຼຸດລົງຢ່າງວ່ອງໄວແບບຕໍ່ເນື່ອງ.

ຕໍ່ສະພາບຄືດັ່ງກ່າວ **ແຕ່ວັນທີ 25 ມິຖຸນາ ຫາ 9 ກໍລະກົດ 2015**, ທະນາຄານກາງ ສປ. ຈີນ ແລະ CSRC ຈຶ່ງອອກມາດຕະການເພີ່ມຈຳນວນໜຶ່ງ ເພື່ອກະຕຸ້ນເສດຖະກິດ ແລະ ຕະຫຼາດທຶນ ຄືນໃໝ່ ເຊັ່ນ:

1. ຫຼຸດອັດຕາເງິນແຮຝາກບັງຄັບ ແລະ ອັດສີດເງິນຈຳນວນ 35 ຕື້ຢວນ ຫຼື 5,7 ຕື້ໂດລາສະຫະລັດ ເຂົ້າສູ່ຕະຫຼາດການເງິນ ໂດຍຜ່ານສັນຍາ reverse repo;
2. ອະນຸຍາດໃຫ້ບໍລິສັດປະກັນໄພ ສາມາດນຳເອົາຊັບສິນ ບໍ່ເກີນ 10% ຂອງຊັບສິນທັງໝົດຂອງບໍລິສັດ ມາລົງທຶນໃນຮຸ້ນ “Blue Chip”;

3. ຫ້າມນັກລົງທຶນ ລວມທັງຜູ້ບໍລິຫານຂອງບໍລິສັດ ຜູ່ທີ່ຖືຮຸ້ນຢູ່ໃນມືມາແລ້ວເກີນ 5% ທຳການຊື້-ຂາຍຮຸ້ນ ເປັນເວລາ 6 ເດືອນ;
4. ອະນຸຍາດໃຫ້ຊື້-ຂາຍແບບ Margin ຄືນໃໝ່ ໂດຍບໍ່ຈຳເປັນຕ້ອງວາງຫຼັກຊັບຄ້ຳປະກັນ (Margin Requirement) ລວມທັງ ຫຼຸດຄ່າທຳນຽມໃນທຸລະກຳຕ່າງໆກ່ຽວກັບການຊື້-ຂາຍຮຸ້ນ;
5. ໂຈະການຊື້-ຂາຍຮຸ້ນຂອງບໍລິສັດຈົດທະບຽນ ຢ່າງໜ້ອຍ 1.300 ແຫ່ງ ຫຼື ປະມານ 43% ຂອງຮຸ້ນທີ່ຈົດທະບຽນ ໃນຕະຫຼາດຫຼັກຊັບ ຕາມການຮ້ອງຂໍຂອງບໍລິສັດຈຳນວນດັ່ງກ່າວ ແລະ ໂຈະການຈົດທະບຽນໃໝ່ຊົ່ວຄາວ ສຳລັບບໍລິສັດ 28 ແຫ່ງ ຕາມການຮ້ອງຂໍ ຈົນກວ່າສະພາບການຂອງຕະຫຼາດຫຼັກຊັບ ຈະຄືນສູ່ສະພາບປົກກະຕິ.

ຜົນຂອງການປະຕິບັດມາດຕະການຂ້າງເທິງ ເຮັດໃຫ້ດັດຊະນີຂອງຕະຫຼາດຫຼັກຊັບ ທັງ ສອງ ແຫ່ງ ມີການປັບຕົວເພີ່ມຂຶ້ນ **ນັບແຕ່ວັນທີ 8 ກໍລະກົດ 2015 ເປັນຕົ້ນມາ** ດັດຊະນີຕະຫຼາດຫຼັກຊັບຊຽງໄຮ້ ໄດ້ປັບຕົວເພີ່ມຂຶ້ນ ຢູ່ທີ 3.924,48 ຈຸດ ຫຼື ເພີ່ມຂຶ້ນ 11,89% ທຽບໃສ່**ວັນທີ 8 ກໍລະກົດ 2015** ຊຶ່ງດັດຊະນີດັ່ງກ່າວ ຢູ່ທີ 3.507,19 ຈຸດ ສ່ວນດັດຊະນີຕະຫຼາດຫຼັກຊັບເຊີນເຈີ້ນ ໄດ້ປັບຕົວເພີ່ມຂຶ້ນ ຢູ່ທີ 2.149,51 ຈຸດ ຫຼື ເພີ່ມຂຶ້ນ 14,06% ທຽບໃສ່**ວັນທີ 8 ກໍລະກົດ 2015** ຊຶ່ງດັດຊະນີດັ່ງກ່າວ ຢູ່ທີ 1.884,45 ຈຸດ.

ຈາກສະພາບດັ່ງກ່າວ ສຳນັກງານ ຄຄຊ ຄາດວ່າ ຈະບໍ່ມີຜົນກະທົບຕໍ່ຕະຫຼາດຫຼັກຊັບລາວ ເນື່ອງຈາກວ່າ: ປະຈຸບັນ ຢູ່ຕະຫຼາດຫຼັກຊັບລາວ ຍັງບໍ່ໄດ້ອະນຸຍາດໃຫ້ມີການຊື້-ຂາຍແບບບໍ່ວາງເງິນມາດຈຳກ່ອນສົ່ງຄຳສັ່ງຊື້-ຂາຍ (Margin), ຫ້າມຊື້-ຂາຍຮຸ້ນ ດ້ວຍເງິນກູ້ຢືມ ແລະ ບໍ່ໄດ້ດຳເນີນມາດຕະການໃດທີ່ມີລັກສະນະຄ້າຍຄືກັບຢູ່ ສປ.ຈີນ ເທື່ອ. ນອກນີ້ ຍັງບໍ່ມີບໍລິສັດໃດ ຮ້ອງຂໍໃຫ້ໂຈະການຊື້-ຂາຍຮຸ້ນຂອງບໍລິສັດຕົນ ຫຼື ຂໍໂຈະການເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ. ສ່ວນດັດຊະນີຂອງຕະຫຼາດຫຼັກຊັບລາວ ໃນໄລຍະດັ່ງກ່າວ ກໍ່ບໍ່ໄດ້ມີສະພາບການເຄື່ອນໄຫວທີ່ຮ້ອນແຮງຕໍ່ເນື່ອງຄືກັບກໍລະນີຂອງຕະຫຼາດຫຼັກຊັບ ສປ.ຈີນ.

ເຖິງຢ່າງໃດກໍ່ຕາມ, ສຳນັກງານ ຄຄຊ ຈະເປັນເຈົ້າການຕິດຕາມສະພາບການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ຢ່າງໃກ້ຊິດ ພ້ອມທັງຕິດຕາມສະພາບການຕະຫຼາດຫຼັກຊັບຕ່າງປະເທດ. ຖ້າເຫັນວ່າ ມີປະກົດການທີ່ໜ້າເປັນຫ່ວງ ສຳນັກງານ ຄຄຊ ຈະລາຍງານໃຫ້ທ່ານຊາບຕື່ມອີກ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມເຫັນສົມຄວນດ້ວຍ.

ຮັກສາການຫົວໜ້າສຳນັກງານ ຄຄຊ




ສາຍສະໝອນ ຈັນທະຈັກ

**ສຳເນົາສົ່ງ**: - ທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການ ທຫລ ເພື່ອຊາບ;
- ທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ເພື່ອຊາບ.

ໝາຍເຫດ: ດັດຊະນີຖານຂອງຕະຫຼາດຫຼັກຊັບ ທັງ ສອງ ແຫ່ງ ຂອງ ສປ.ຈີນ ແມ່ນ 1.000 ຈຸດ.

ແຜນວາດທີ 1:    ການເຄື່ອນໄຫວຂອງດັດສະນີຊຽງໄຮ້ (SHCOMP Index)
ຂອງຕະຫຼາດຫຼັກຊັບ ສປ.ຈີນ ນັບຕັ້ງແຕ່ ເດືອນຕຸລາ ປີ 2014 ເຖິງ ວັນທີ 14 ກໍລະກົດ 2015.




ແຜນວາດທີ 2:   ການເຄື່ອນໄຫວຂອງດັດສະນີເຊີນເຈີ້ນ (SZCOMP Index)
ຂອງຕະຫຼາດຫຼັກຊັບ ສປ.ຈີນ ນັບຕັ້ງແຕ່ ເດືອນຕຸລາ ປີ 2014 ເຖິງ ວັນທີ 14 ກໍລະກົດ 2015.



ແຜນວາດທີ 3:   ການເຄື່ອນໄຫວຂອງດັດສະນີລາຄາຕະຫຼາດຫຼັກຊັບລາວ (LSX Index)
ນັບຕັ້ງແຕ່ ເດືອນຕຸລາ ປີ 2014 ເຖິງ ວັນທີ 14 ກໍລະກົດ 2015.

